# ກິດຈະກຳດ້ານການຕະຫຼາດ: ການທົດລອງຜະລິດກະສິກຳແບບທຸລະກິດ -ຈາກການປູກເພື່ອຂະຫຍາຍຊ່ອງທາງການຂາຍ-

ທ່ານເຄີຍປະສົບກັບບັນຫາແນວນີ້ບໍເຊັ່ນວ່າ "ບໍ່ມີຊາວນາທຳການຜະລິດເລີຍເຖິງວ່າເຮົາຈະກະກຽມແນວພັນໃຫ້", "ຊາວນາບໍ່ຈັ່ງຕັ້ງປະຕິບັດເຖິງວ່າເຮົາຈັດຝຶກອົບຮົມເຕັກນິການປູກຝັງໃຫ້"? ໃນເວລາດຳເນີນກິດຈະກຳຂອງໂຄງການໃນດ້ານການປູກພືດຜັກ ແລະ ການສົ່ງເສີມການຂາຍເພື່ອເປັນການເພີ່ມລາຍຮັບໃຫ້ຊາວນາ,ພວກຄຳນຶງເຖິງຄວາມກະຕືລືລົ້ນຂອງຊາວນາສະເໝີ. ເຖິງແມ່ນວ່າຄຸນພາບຂອງການຝຶກອົບຮົມ ແລະ ແນວພັນດີແລ້ວກໍ່ຕາມແຕ່ວ່າສິ່ງເຫຼົ່ານັ້ນຈະບໍ່ໄດ້ຖືກນຳໃຊ້ຖ້າຊາວນາບໍ່ມີຄວາມສົນໃຈຫຼືຄວາມກະຕືລືລົ້ນ.

ໃນປຶ້ມຄູ່ມືຂອງໂຄງການເຮົາໄດ້ບັນທຶກໄວ້ໂດຍມີຄຳອະທິບາຍທີ່ຫຼາກຫຼາຍເຊັ່ນ:ວິທີການເບິ່ງວ່າຊາວນາມີແຮງຈູງໃຈຫຼືບໍ່ ແລະ ການຊອກຫາຊາວນາທີ່ມີແຮງຈູງໃຈສູງ ສຳລັບການເພີ່ມໄດ້ຮັບບໃຫ້ແກ່ເຂົາເອງ, ແລະ ວິທີການຂອງພະນັກງານລັດໃນການຊຸກຍູ້ຊາວນານັບຕັ້ງແຕ່ການສ້າງພື້ນຖານທຸລະກິດຂອງພວກເຂົາເອງຂຶ້ນມາ ໄປຈົນເຖິງການສົ່ງເສີມການຂາຍໃຫ້ຊາວນາ.




## 1. ຈຸດສຳຄັນຂອງກິດຈະກຳດ້ານການຕະຫຼາດ

① ຊາວນາພິຈາລະນາດ້ວຍຕົວເອງວ່າຈະປູກພືດຊະນິດໃດ ແລະ ປູກໃນຊ່ວງເວລາໃດເພື່ອຈະຂາຍໄດ້ກຳໄລງາມ

② ພະນັກງານລັດສຳຫຼວດສະພາບການຂອງການເຮັດສັນຍາການປູກຝັງ ແລະ ສຳຫຼວດພືດທີ່ມີທ່າແຮງດ້ານການຕະຫຼາດສູງເພື່ອເຜີຍແຜ່ໃຫ້ແກ່ຊາວນາ.

③ ຊາວນາຮຽກຮ້ອງເຕັກນິກການປູກຝັງຂອງພືດ ເພື່ອ ຕອບສະໜອງຕໍ່ຄວາມຕ້ອງການຂອງຕະຫຼາດ.

④ ມີການສ້າງເຄືອຂ່າຍທ້ອງຖິ່ນ ແລະ ກິດຈະກຳດ້ານທຸລະກິດເພື່ອເປັນການສົ່ງເສີມການຂາຍ

⑤ ຊາວນາໄດ້ເອົາໃຈໃສ່ໃນຜົນກຳໄລໂດຍການຈົດບັນທຶກຜົນກຳໄລ ແລະ ຂາດທຶນ, ແລະ ການວາງແຜນການປູກ.

ໂຄງການໄດ້ຈັດຕັ້ງກິດຈະກຳເຫຼົ່ານີ້ໂດຍການຮ່ວມມືຂອງພະນັກງານກະສິກຳ ແລະ ອຸດສາຫະກຳໃນຂັ້ນແຂວງ ແລະ ຂັ້ນເມືອງ.




ພະນັກງານລັດສຳຫຼວດລາຄາຕະຫຼາດ ແລະ ການເໜັງຕີງຂອງມັນຢ່າງເປັນປະຈຳເພື່ອເປັນຂໍ້ມູນອ້າງອີງໃຫ້ຊາວນາ





ຊາວນາຮັບຮູ້ວ່າໂຕເອງໄດ້ກຳໄລຫຼືຂາດທຶນຈາກກອງປະຊຸມສຳມະນາ ຈາກນັ້ນພວກເຂົາໄດ້ພິຈາລະນາວ່າຈະປູກພືດຊະນິດໃດ ແລະ ປູກເມື່ອໃດ

## 2. ແມ່ນຫຍັງທີ່ຂຽນລົງໃນປຶ້ມຄູ່ມືແນ່?

ກິດຈະກຳດ້ານການຕະຫຼາດກວມເອົາ 3 ຫຼັກການຄື, “ຜະລິດແນໃສ່ຄວາມຕ້ອງການຂອງຕະຫຼາດ”,”ການສົ່ງເສີມການຂາຍ” ແລະ “ປັບປຸງການຈັດການໆຜະລິດ”. ຈຸດທີ່ສຳຄັນທີ່ສຸດແມ່ນວິທີການເພີ່ມຊາວກະສິກອນຜູ້ທີ່ສົນໃຈ ແລະ ຜູ້ທີ່ກຳລັງປະຕິບັດທຸລະກິດກະສິ ກຳ ຢ່າງແທ້ຈິງ. ເພື່ອເຮັດສິ່ງນີ້,ຈຸດສຳຄັນແມ່ນການສະສົມປະສົບການທີ່ໄດ້ສຳເລັດຜົນເລັກໆນ້ອຍໆຂອງຊາວກະສິກອນທີ່ມີແຮງຈູງໃຈສູງ.

ໃນປຶ້ມຄູ່ມື, ເນື້ອໃນເລີ່ມຈາກໃຫ້ຊາວນາຮູ້ຈັກສະພາບລາຍຮັບຂອງໂຕເອງ, ສິ່ງທີ່ຕ້ອງເຮັດເພື່ອເພີ່ມລາຍຮັບໂດຍການນຳສະເໜີຊາວນາໂຕແບບທີ່ມີຄວາມພະຍາຍາມ ແລະ ສະເໜີການສຳຫຼວດຕະຫຼາດໄປຈົນເຖິງການຈັດຝຶກອົບຮົມເຕັກນິການປູກ. ດ້ານການສົ່ງເສີມການຂາຍມີການນຳສະເໜີປະສົບການຕົວຈິງຫຼາຍຢ່າງເຊັ່ນ: ພືດຊະນິດໃດ ແລະ ວິທີການຂາຍ,ເຮັດໃຫ້ເປັນທີ່ຕ້ອງການຂອງຕະຫຼາດໄດ້ແນວໃດ ແລະ ອື່ນໆ. ສຳລັບການຄຸ້ມຄອງກະສິກຳ, ສ່ວນຫຼາຍແມ່ນໄດ້ອະທິບາຍກ່ຽວກັບການຄຸ້ມຄອງຄຸນນະພາບ ແລະ ການສະໜອງຢ່າງສະໝ່ຳສະເໜີໂດຍອີງໃສ່ສະພາບໃນປະຈຸບັນ

ໃນປຶ້ມຄູ່ມືພາກທີ II,IV, ແລະ V, ເຕັກນິກ ແລະ ຄຳແນະນຳທີ່ເປັນປະໂຫຍດຫຼາຍຢ່າງໄດ້ຖືກນຳສະເໜີວ່າພະນັກງານ (ຫ້ອງການກະສິກຳ ແລະ ປ່າໄມ້ແຂວງ) ແລະ (ພະແນກອຸດສາຫະກຳ ແລະ ການຄ້າ) ສາມາດສາມາດນຳໃຊ້ໄດ້ໃນພາກສະໜາມ.

ສຳລັບຜູ້ທີ່ສົນໃຈໃນຫົວຂໍ້ລຸ່ມນີ້ສາມາດພົວພັນມາທາງໂຄງການ ສະຫວັນເພັດໄດ້.

### ພາກ II ຜະລິດໂດຍແນໃສ່ຄວາມຕ້ອງການຂອງຕະຫຼາດ

1 ສ້າງຄວາມເປັນເຈົ້າການ ແລະ ການກະຕຸ້ນແຮງຈູງໃຈ

(1) ຈຸດເລີ່ມຕົ້ນ: ຮູ້ຈັກຕົວເຂົາເອງ
(2) ຈິນຕະນາການໃນສິ່ງທີ່ຕ້ອງການຢາກເປັນ

2 ການຝຶກອົບຮົມດ້ານເຕັກນິກ

(1) ຄວາມສຳຄັນຂອງການປັບປຸງດິນ ແລະ ການເຮັດຝຸ່ນໝັກ
(2) ການສຳຫຼວດຕະຫຼາດ ແລະ ການຄັດເລືອກພືດປູກ
(3) ສ້າງແຜນການປູກຝັງ
(4) ຮຽນຮູ້ເຕັກນິກການປູກພື້ນຖານຈາກຊາວນາທີ່ມີປະສົບການ

3 ແລກປ່ຽນປະສົບການ ແລະ ສ້າງເຄືອຂ່າຍ

(1) ຈັດປະຊຸມທົບທວນກິດຈະກຳຄືນພາຍໃນບ້ານ
(2) (ຊາວນາພົບຊາວນາ) ຈັດການແລກປ່ຽນຂັ້ນແຂວງ

### ພາກທີ IV ການສົ່ງເສີມການຂາຍ

1 ແນະນຳຜັກທີ່ຕະຫຼາດຕ້ອງການສູງໃຫ້ຊາວນາ

(1) ສຳຫຼວດຕະຫຼາດ/ແນະນຳໃຫ້ຊາວນາໄດ້ເລືອກພືດປູກ
(2) ຈັດຝຶກອົບຮົມການປູກ ແລະ ໃຫ້ເມັດພັນສຳລັບທົດລອງ

2 ການໂຄສະນາ ແລະ ສົ່ງເສີມການຂາຍ

(1) ຊ່ວຍເຫຼືອໃນເວລາເກັບຜົນຜະລິດເພື່ອຂາຍ

### ພາກທີ V ການປັບປຸງການບໍລິຫານຈັດການສວນປູກ

1 ສ້າງຄວາມສາມາດເພື່ອການສ້າງກຳໄລຢ່າງຕໍ່ເນື່ອງ

(1) ບັນທຶກການຂາຍ
(2) ແຜນການປູກ ແລະ ສືບຕໍ່ສະໜອງໄດ້ຢ່າງຕໍ່ເນື່ອງ
(3) ການບໍລິຫານຈັດການດ້ານຄຸນນະພາບຂອງກຸ່ມ

**ເອົາໃຈໃສ່ !**

**ປຶ້ມຄວາມຮູ້ ສະຫວັນເພັດ**

ຂໍ້ມູນລາຍລະອຽດກ່ຽວກັບເຕັກນິກການປູກເຂົ້າ ແລະ ຜັກ ສາມາດເຂົ້າເບິ່ງຕາມລິ້ງລຸ່ມນີ້

Savanpad.webnode.com




**ເຟສບຸກ** Share




**ສະບັບຕໍ່ໄປ** ຈະລາຍງານການຕິດຕາມ ແລະ ປະເມີນຜົນກິດຈະກຳຈັດຕັ້ງໂດຍພະນັກງານລັດ.


ຈົດໝາຍແຈ້ງຂ່າວຂອງໂຄງການ ສະຫວັນເພັດ
ໂຄງການພັດທະນາ ກະສິກຳ ແບບມີສ່ວນຮ່ວມ ແຂວງສະຫວັນນະເຂດ (ສະຫວັນເພັດ)


ຕູ້ ປ.ນ. 16, ຂະແໜງຊົນລະປະທານ, ພະແນກ ກະສິກຳ ແລະ ປ່າໄມ້ ແຂວງສະຫວັນນະເຂດ, (ໂທ : 041-252497)